# ຈົດໝາຍເຕືອນການປ່ຽນແທນບັດຜົນປະໂຫຍດຫຼາຍເກີນໄປ

ວັນທີ່ ________________

________________________________________
ຊື່ຜູ້ຮັບບໍລິການ (ຫົວໜ້າຄົວເຮືອນ)

________________________________________
ທີ່ຢູ່

________________________________________
ເມືອງ, ຣັຖ ແລະລະຫັດໄປສະນີ

________________________________________
ເລກຄົວເຮືອນ/ເລກກໍລະນີປະຈໍາຄາວຕີ້

ຮຽນ ________________________

ບັນທຶກໃນຄອມພິວເຕີຂອງພວກເຮົາສະແດງໃຫ້ເຫັນວ່າ ທ່ານໄດ້ໃຊ້ບັດຜົນປະໂຫຍດ ອີບີທີໃໝ່ (EBT) ສີ່ໃບຫຼືຫຼາຍກ່ວານັ້ນພາຍໃນໄລຍະ 12 ເດືອນຜ່ານມາ. ນີ້ສະແດງວ່າ ທ່ານອາດພວມມີບັນຫາກັບບັດ EBT ຂອງທ່ານ ແລະ/ຫຼື ເປັນໄປໄດ້ວ່າມີການໃຊ້ບັດຜົນປະໂຫຍດ CalFresh ຢ່າງບໍ່ຖືກຕ້ອງ. ທ່ານສາມາດໃຊ້ບັດ EBT ອັນດຽວກັນນັ້ນໄດ້ທຸກເດືອນດົນເທົ່າທີ່ທ່ານໄດ້ຮັບການຊ່ວຍເຫຼືອດ້ານອາຫານຂອງທ່ານ. ຖ້າວ່າ ທ່ານມີບັນຫາກັບບັດ EBT ຂອງທ່ານ, ກະຣຸນາໂທຣໂດຍບໍ່ເສຽຄ່າທໍານຽມໄປທີ່ ສາຍໂທຣບໍລິການລູກຄ້າ EBT ທີ່ 877-328-9677 ຫຼື ຕິດຕໍ່ພະນັກງານປະຈໍາຄາວຕີ້ຂອງທ່ານເພື່ອຮຽນຮູ້ວິທີການໃຊ້ບັດຂອງທ່ານ.

ມັນຜິດກົດໝາຍທີ່ຈະເຮັດ ຫຼື ພະຍາຍາມເຮັດສິ່ງຕໍ່ໄປນີ້: ຊື້, ຂາຍ, ລັກ ຫຼື ແລກປ່ຽນບັດ EBT ຫຼື ຜົນປະໂຫຍດ CalFresh. ການຂາຍບັດ EBT ແລະການປ່ຽນບັດ EBT ທັງໝົດ ຈະຖືກກວດຕິດຕາມເບິ່ງໂດຍທາງຄອມພິວເຕີ. ພວກເຮົາເຮັດແບບນີ້ເພື່ອໃຫ້ໝັ້ນໃຈວ່າ ມີການນໍາໃຊ້ບັດຢ່າງຖືກຕ້ອງ ແລະເພື່ອປ້ອງກັນການເອົາປຽບຫາປະໂຫຍດຈາກໂຄງການ CalFresh. ອີງຕາມການບັນທຶກທາງຄອມພິວເຕີເຫຼົ່ານັ້ນ, ພວກເຮົາອາດສືບສວນການນໍາໃຊ້ບັດ EBT ທີ່ບໍ່ຖືກຕ້ອງຕ່າງໆຂອງທ່ານ. ຖ້າວ່າ ມີການພົບວ່າທ່ານຕ້ອງຮັບຜິດຊອບຕໍ່ການນໍາໃຊ້ບັດ EBT ທີ່ບໍ່ຖືກຕ້ອງຂອງທ່ານ, ກໍອາດມີການລະງັບຜົນປະໂຫຍດຂອງທ່ານ, ທ່ານອາດຕ້ອງຈ່າຍຄືນຜົນປະໂຫຍດ, ທ່ານອາດຖືກປັບ, ຫຼື ຖືກສົ່ງເຂົ້າຄຸກ ຫຼື ຖືກຂັງຢູ່ຄຸກ.

ເພື່ອຮັກສາຜົນປະໂຫຍດ CalFresh ຂອງທ່ານ, ຂໍເຕືອນທ່ານວ່າ ບັດດັ່ງກ່າວນັ້ນຕ້ອງນໍາໃຊ້ສະເພາະ ເພື່ອຊື້ອາຫານໃຫ້ທ່ານ ແລະຄົນໃນຄົວເຮືອນຂອງທ່ານກິນເທົ່ານັ້ນ, ຫຼື ເມັດພັນພືດເພື່ອປູກເປັນອາຫານສໍາລັບຄົວເຮືອນຂອງທ່ານ. ທ່ານສາມາດນໍາໃຊ້ບັດ EBT ເພື່ອຈຸດປະສົງເຫລົ່ານີ້ໄດ້ເລື້ອຍໆ. ຈົດໝາຍສະບັບນີ້ບໍ່ປ່ຽນແປງຜົນປະໂຫຍດ CalFresh ຂອງທ່ານ, ແຕ່ຄາວຕີ້ຈະເກັບເອົາສໍາເນົາຂອງຈົດໝາຍນີ້ໄວ້ໃນແຟ້ມຂໍ້ມູນຂອງທ່ານ.

ທານບໍ່ຈໍາເປັນຕ້ອງເຮັດຫຍັງດຽວນີ້ ຍົກເວັ້ນແຕ່ໃຫ້ແນ່ໃຈວ່າ ທ່ານໃຊ້ບັດ EBT ຂອງທ່ານຢ່າງຖືກຕ້ອງ. ຖ້າວ່າ ທ່ານມີຄໍາຖາມອື່ນໆກ່ຽວກັບຈົດໝາຍສະບັບນີ້, ກະຣຸນາຕິດຕໍ່ ________________________________________.
(ເລກຕິດຕໍ່ທາງໂທຣະສັບຂອງຄາວຕີ້)